TOKLONG(LMT)2014.1doc.doc

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 826 /ກງ

ນະຄອນຫຼວງວຽງຈັນ, ວັນທີ 24 MAR 2014

# ຄຳສັ່ງແນະນຳເພີ່ມເຕີມ

## ກ່ຽວກັບການປັບປຸງເງິນຄ້ຳປະກັນ ແລະ ການສ້າງຕັ້ງ ຕົວແທນຈຳໜ່າຍ ຫວຍພັດທະນາ ທຸກປະເພດ ມີກຳນົດເວລາ

* ອີງຕາມ:

- ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ , ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ຂໍ້ຕົກລົງຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ສະບັບເລກທີ 70/ນຍ, ລົງວັນທີ 01/7/2008 ວ່າດ້ວຍ ການຄຸ້ມຄອງກິດຈະການຫວຍ.
- ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ1026/ກງ, ລົງວັນທີ 12/6/2013 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດຫວຍພັດທະນາ.
- ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1332/ກງ, ລົງວັນທີ 17/06/2009 ກ່ຽວກັບການຄຸ້ມຄອງກິດຈະການຫວຍ.
- ການເຫັນດີຂອງກອງປະຊຸມຜູ້ຕາງໜ້າຜູ້ຖືຮຸ້ນຂອງລັດ ສະໄໝສາມັນ ຄັ້ງທີ VIII ວັນທີ 05/3/2014.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງກິດຈະການຫວຍພັດທະນາ ທຸກປະເພດ ໄດ້ມີການຈັດຕັ້ງປະຕິບັດ ເປັນເອກະພາບຖືກຕ້ອງຕາມມາດຖານເງື່ອນໄຂ ແລະ ທັງສອດຄ່ອງ ກັບສະພາບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມໄລຍະໃໝ່.

## ລັດຖະມົນຕີວ່າການກະຊວງການເງິນອອກຄຳສັ່ງແນະນຳເພີ່ມເຕີມດັ່ງນີ້:

1. ເຫັນດີ ໃຫ້ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ປັບປຸງເງິນຄ້ຳປະກັນການຈຳໜ່າຍ ຫວຍພັດທະນາ ທຸກປະເພດ ຈາກ1,5% ຂອງມູນຄ່າຈຳໜ່າຍ ແລະ ເງິນຄ້ຳປະກັນ 10% ຂອງມູນຄ່າລາງວັນ ມາເປັນ 20% ຂອງມູນຄ່າຈຳໜ່າຍ/ຄັ້ງ ແລະ ປັບປຸງການແຕ່ງຕັ້ງຕົວແທນຈຳໜ່າຍຫວຍພັດທະນາ ທຸກປະເພດ ມີກຳນົດເວລາການເຄື່ອນໄຫວ 03 ປີ/ຄັ້ງ ແລະ ຕໍ່ອາຍຸໄດ້ພາຍຫລັງມີການກວດກາປະເມີນຜົນການປະຕິບັດໜ້າທີ່ຜ່ານມາ ແລະ ມູນຄ່າຊັບສິນ - ໜີ້ສິນຂອງຕົວແທນຈຳໜ່າຍ, ແຕ່ຖ້າຫາກຕົວແທນໃດຂາດມາດຖານ ແລະ ບໍ່ມີເງື່ອນໄຂພຽງພໍ ໃຫ້ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ ພິຈາລະນາຍົກເລີກ ຕາມລະບຽບການ.
2. ມອບໃຫ້ຫ້ອງການກະຊວງການເງິນ, ບໍລິສັດລັດ ວິສາຫະກິດ ຫວຍພັດທະນາ, ພະແນກການເງິນແຂວງ, ນະຄອນຫລວງ ຈົ່ງພ້ອມກັນຈັດຕັ້ງຜັນຂະຫຍາຍຄຳສັ່ງແນະນຳເພີ່ມເຕີມສະບັບນີ້ໃຫ້ເຂັ້ມງວດ.
3. ຄຳສັ່ງແນະນຳເພີ່ມເຕີມສະບັບນີ້ ໃຊ້ປ່ຽນແທນ ຂໍ້ທີ V ຢູ່ໃນຂໍ້ (5) ຂອງຄຳສັ່ງແນະນຳ ສະບັບເລກທີ 1332/ກງ, ລົງວັນທີ 17/06/2009 ແລະ ມີຜົນສັກສິດໃຊ້ໄດ້ເປັນທາງການ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ບຸນໂຈມ ອຸບົນປະເສີດ

Bounchom UBONPASEUTH